## ບົດຮຽນ 18 - ອານາຈັກ ແລະ ພັນທະສັນຍາເດີມ

ໃນບົດຮຽນທີ່ຜ່ານມາ ພວກເຮົາໄດ້ຮຽນຮູ້ວ່າ ພຣະເຈົ້າຊົງສັນຍາຈະໃຫ້ແຜ່ນດິນ ແລະ ຊົນຊາດອັນເປັນນິດແກ່ອັບຣາຮາມ. ພວກເຮົາຍັງໄດ້ຮຽນອີກວ່າ ດາວິດກໍໄດ້ຮັບພຣະສັນຍາເປັນກະສັດ ແລະ ອານາຈັກນິລັນດອນ. ຜູ້ທຳນວາຍໃນພຣະຄຳພີເດີມໄດ້ໃຫ້ລາຍລະອຽດຢ່າງຈະແຈ້ງກ່ຽວກັບພຣະສັນຍາເລື່ອງອານາຈັກ. ຕອນນີ້ພວກເຮົາຈະຮຽນຮູ້ເພີ່ມເຕີມກ່ຽວກັບທຳມະຊາດ ແລະ ລັກສະນະຂອງອານາຈັກນີ້.

### ຄວາມສະຫງົບສຸກ ແລະ ຄວາມຊອບທຳ

"ແລ້ວພຣະອົງຈະຕັດສິນການຂັດແຍ່ງໃນທ່າມກາງຂອງຊົນຊາດທັງຫລາຍ. ພວກເຂົາຈະຕີດາບເປັນໝາກສົບໄຖ, ຕີຫອກເປັນມີດຕອນຕົ້ນໄມ້, ຊົນຊາດທັງຫລາຍຈະບໍ່ເຮັດເສິກອີກຕໍ່ໄປ ແລະ ຈະບໍ່ກຽມເຂົ້າສູ່ສົງຄາມອີກຈັກເທື່ອ." (ອ່ານເອຊາຢາ 2:1-4). ອານາຈັກນີ້ຈະເປັນອານາຈັກແຫ່ງຄວາມສະຫງົບສຸກ, ຊົນຊາດຕ່າງໆ ຈະບໍ່ຮູ້ວິທີເຮັດສົງຄາມຕໍ່ໄປອີກ.

"...ແລ້ວລາວຈະບໍ່ຕັດສິນຕາມຕາເຫັນ ຫລືຄຳທີ່ຄົນເວົ້າ: ແຕ່ລາວຈະຕັດສິນຄົນທຸກລຳບາກດ້ວຍຄວາມຍຸດຕິທຳ ແລະ ຄວາມຊອບທຳຈະເປັນເຫມືອນສາຍແອວຂອງລາວ" (ອ່ານເອຊາຢາ 11:3-5). ບໍ່ຄືກັບຜູ້ພິພາກສາຄວາມໃນປັດຈຸບັນ, ກະສັດຈະບໍ່ຖືກຈຳກັດພຽງແຕ່ການຕັດສິນຕາມສິ່ງທີ່ລາວໄດ້ຍິນ ແລະ ເຫັນ. ພຣະອົງຈະຕັດສິນດ້ວຍຄວາມຊອບທຳທີ່ສົມບູນແບບ. ບໍ່ມີທະນາຍຄວາມຜູ້ໃດທີ່ສະຫລາດພໍທີ່ຈະເຮັດໃຫ້ລາວໂງ່ໄດ້. ມັນຈະເປັນອານາຈັກຂອງຄວາມຊອບທຳ.

### ຄຳສາບແຊ່ງຖືກຖອນອອກຈາກສັດ ແລະ ພືດພັນ

"ໝາໄນກັບແກະຈະຢູ່ນຳກັນຢ່າງສັນຕິສຸກ_ແລະງົວກັບໂຕໝີນັ້ນຈະກິນນຳກັນ; ລູກພວກມັນຈະນອນຢ່າງເປັນສຸກລົ້ນ_ແລະ ເດັກອ່ອນນ້ອຍກໍບໍ່ມີອັນຕະລາຍເມື່ອພວກເຂົາຫລິ້ນຢູ່ໃກ້ກັບງູພິດ." (ອ່ານເອຊາຢາ 11:6-9). ໃນການຊົງສ້າງຕອນທຳອິດ, ມະນຸດ ແລະ ສັດຢູ່ຮ່ວມກັນຢ່າງສະຫງົບສຸກ ແລະ ບັນດາສັດທັງປວງກໍຢູ່ຮ່ວມກັນຢ່າງສະຫງົບສຸກ. ພຽງແຕ່ຕໍ່ມາ ສັດເລີ່ມກິນກັນແລະກັນ ແລະ ຄວາມຢ້ານກົວກໍໄດ້ເກີດຂຶ້ນລະຫວ່າງຄົນ ແລະ ສັດ (ເບິ່ງປະຖົມມະການ 1:29;9:2-3). ຄຳສາບແຊ່ງນີ້ຈະຖືກລົບລ້າງອອກຈາກອານາຈັກດັ່ງກ່າວ. ໝາປ່າ ແລະ ລູກແກະຈະໃຊ້ຊີວິດຢູ່ຮ່ວມກັນ ໝາປ່າຈະບໍ່ກິນລູກແກະ. ງົວ ແລະ ຫມີກັບລູກຂອງພວກມັນຈະຢູ່ຮ່ວມກັນ. ຫມີຈະບໍ່ທຳຮ້າຍງົວ. ເດັກນ້ອຍຈະຫຼິ້ນໃກ້ກັບຖ້ຳຂອງງູພິດ ແລະ ຈະບໍ່ໄດ້ຮັບການທຳຮ້າຍເລີຍ. ໂຕສັດຈະຖືກເຮັດໃຫ້ຄຸ້ນເຄີຍກັບມະນຸດ.

> "ເພາະແຜ່ນດິນໂລກຈະເຕັມໄປດ້ວຍຄວາມຮູ້ເລື່ອງພຣະຜູ້ເປັນເຈົ້າ, ເໝືອນດັ່ງທ້ອງທະເລຫລວງທີ່ເຕັມໄປດ້ວຍນ້ຳ." (ເອຊາຢາ 11:9) ນັບຕັ້ງແຕ່ອາດາມເຮັດບາບ ແຜ່ນດິນໂລກກໍບໍ່ເຄີຍໄດ້ຮູ້ເລື່ອງຂອງພຣະຜູ້ເປັນເຈົ້າ. ຄົນສ່ວນໃຫຍ່ບໍ່ສົນໃຈ ແລະ ປະຕິເສດພຣະຄຳຂອງພຣະເຈົ້າ. ຂໍ້ນີ້ພັນລະນາເຖິງອານາຈັກທີ່ຍັງບໍ່ທັນມີຢູ່ໃນໂລກຢ່າງຈະແຈ້ງ. ເມື່ອອານາຈັກນັ້ນມາເຖິງ ແຜ່ນດິນໂລກຈະເຕັມໄປດ້ວຍຄວາມຮູ້ເລື່ອງພຣະຜູ້

ເປັນເຈົ້າ. "ຖິ່ນແຫ້ງແລ້ງກັນດານນັ້ນຈະຊົມຊື່ນຍິນດີ, ດອກໄມ້ຈະເບັ່ງບານໃນດິນທີ່ແຫ້ງແລ້ງຢ່າງອຸດົມສົມບູນ." (ອ່ານ ເອຊາຢາ 35).

ຄຳສາບແຊ່ງກ່ຽວກັບການພືດພັນກໍຈະຖືກລົບລ້າງ (ປະຖົມມະການ 3:18). ຊາວນາຈະບໍ່ທຸກທົນກັບຄວາມແຫ້ງແລ້ງ, ຫຍ້າ, ແມງໄມ້ ແລະ ອື່ນໆ. ການເກັບກ່ຽວຈະອຸດົມສົມບູນ. ພືດພັນກໍຈະບໍ່ເປັນອັນຕະລາຍແກ່ມະນຸດ.

<u>ການປິ່ນປົວຝ່າຍຮ່າງກາຍ</u>

"ຄົນຕາບອດຈະເຫັນຮຸ່ງເມື່ອເຂົາແນມໄປມາ, ຄົນຫູໜວກຈະໄດ້ຍິນເມື່ອເຂົາຟັງຄົນເວົ້າ. ຄົນພິການຈະກະໂດດເຕັ້ນຟ້ອນລຳທຳເພງ ແລະ ຜູ້ປາກບໍ່ເປັນກໍຈະຊົມຊື່ນຍິນດີດ້ວຍສຽງໂຮຮ້ອງ..." (ອ່ານເອຊາຢາບົດທີ 35). ຄວາມພິການທາງຮ່າງກາຍ ແລະ ພະຍາດທີ່ມະນຸດເປັນໃນປັດຈຸບັນນີ້ຈະໄດ້ຮັບການປິ່ນປົວ. ຄຳສາບແຊ່ງນີ້ຈະຖືກເອົາອອກເຊັ່ນກັນ. [ສັງເກດເບິ່ງວ່າ ການປິ່ນປົວນີ້ບໍ່ເກີດຂຶ້ນຈົນກ່ວາພຣະຄຣິດ, ຜູ້ຊົງເປັນກະສັດຈະສະເດັດກັບຄືນມາ. "ພຣະອົງຈະກັບມາແກ້ແຄ້ນສັດຕູຂອງພວກເຈົ້າ ແລ້ວຄົນຕາບອດກໍຈະເຫັນຮຸ່ງ" (ຂໍ້ທີ 4-6). ຈະມີການປິ່ນປົວທາງດ້ານຮ່າງກາຍຢູ່ໃນອານາຈັກນີ້.

"ພວກແອນ້ອຍຈະບໍ່ຕາຍຕັ້ງແຕ່ຕອນເກີດໃຫມ່ອີກຕໍ່ໄປ ແລະ ປະຊາຊົນທັງໝົດຈະມີອາຍຸໝັ້ນຍືນຫລາຍ; ເພາະເດັກລາວຈະຕາຍໃນອາຍຸຮ້ອຍປີ; ແຕ່ຄົນບາບອາຍຸຮ້ອຍປີຈະຖືກສາບແຊ່ງ" (ອ່ານເອຊາຢາ 65:19-25). ຊີວິດຂອງມະນຸດຈະຍາວຫຼາຍ. ບາງຄົນທີ່ຕາຍເມື່ອອາຍຸຫນຶ່ງຮ້ອຍປີຍັງຖືວ່າເປັນເດັກນ້ອຍ. ສາເຫດດຽວຂອງການເສຍຊີວິດຕອນອາຍຸໜຶ່ງຮ້ອຍປີກໍຈະເປັນຍ້ອນການພິພາກສາບາບ, ບໍ່ແມ່ນຍ້ອນພະຍາດການເຈັບເປັນ.

<u>ອານາຈັກຝ່າຍຮ່າງກາຍ, ອານາຈັກນິລັນດອນເທິງແຜ່ນດິນໂລກ.</u>

ດານີເອນ ບົດທີ 2 ໄດ້ເວົ້າເຖິງຄວາມຝັນຂອງເນບູກາດເນັດສາ ແລະ ການຕີຄວາມໝາຍຂອງມັນ. ຄວາມຝັນແມ່ນກ່ຽວກັບສີ່ອານາຈັກໃນໂລກນີ້. ອານາຈັກທຳອິດແມ່ນບາບີໂລນ, ອານາຈັກທີສອງແມ່ນມີເດຍ-ເປີເຊຍ, ອານາຈັກທີສາມແມ່ນກຣີກ ແລະ ອານາຈັກທີສີ່ແມ່ນອານາຈັກຂອງຜູ້ຕໍ່ຕ້ານພຣະຄຣິດ. ແນ່ນອນ, ທັງສີ່ອານາຈັກນີ້ແມ່ນອານາຈັກຝ່າຍຮ່າງກາຍເທິງແຜ່ນດິນໂລກ (ບໍ່ແມ່ນອານາຈັກທາງຈິດວິນຍານ). ແລ້ວພວກເຮົາກໍມາເຖິງອານາຈັກສຸດທ້າຍໃນໂລກ. "

ໃນສະໄໝທີ່ກະສັດເຫຼົ່ານັ້ນປົກຄອງ ພຣະເຈົ້າແຫ່ງສະຫວັນຈະຕັ້ງອານາຈັກໜຶ່ງຂຶ້ນ ຊຶ່ງຈະບໍ່ສູນຫາຍໄປຈັກເທື່ອ. ອານາຈັກນີ້ຈະບໍ່ຖືກຕີໃຫ້ພ່າຍແພ້ຈັກເທື່ອ, ແຕ່ຈະທຳລາຍອານາຈັກອື່ນໆໃຫ້ໝົດສິ້ນໄປ ແລ້ວກໍຈະຕັ້ງໝັ້ນຢູ່ຕະຫລອດໄປເປັນນິດ." (ດານີເອນ 2:44). ເຮົາຍັງສືບຕໍ່ເນັ້ນໃຫ້ເຫັນວ່າ ນີ້ຈະເປັນອານາຈັກອັນເປັນນິດ, ເປັນອານາຈັກທີ່ມີຄວາມໝາຍຕາມຕົວທີ່ເວົ້າມາ, ເປັນອານາຈັກທີ່ຢູ່ໃນແຜ່ນດິນໂລກນີ້ແທ້ ເພາະວ່າຫຼາຍໂບດຍັງປະຕິເສດຄວາມຈິງນີ້ຢູ່. ພວກເຂົາສອນວ່າ ອານາຈັກນີ້ເປັນພຽງອານາຈັກຝ່າຍວິນຍານ. ຢ່າງໃດກໍຕາມ, ພວກເຮົາໄດ້ເຫັນພຣະຄຳພີຫລາຍຂໍ້ໃນບົດຮຽນນີ້ ແລະ ໃນບົດຮຽນ 17 ທີ່ຢືນຢັນວ່າເປັນອານາຈັກຝ່າຍຮ່າງກາຍ ແລະ ເປັນ

ອານາຈັກອັນນິລັນດອນ. ມີຫຼາຍຮ້ອຍຂໍ້ໃນພຣະຄຳພີເດີມທີ່ເວົ້າເຖິງອານາຈັກຕາມພຣະສັນຍານີ້. ມັນເປັນໄປບໍ່ໄດ້ທີ່ຈະເຂົ້າໃຈພຣະຄຳພີໂດຍບໍ່ເຂົ້າໃຈວ່າ ອານາຈັກນີ້ສຳຄັນຫຼາຍໃນພຣະຄຳພີເດີມ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/27/27_Da_02_06_RG.jpg - ໃຊ້ສຳລັບເປັນຕົວຢ່າງຂອງດານີເອນ 2:44 ເທົ່ານັ້ນ.

## ພຣະຄຳພີເດີມເລີ່ມຕົ້ນເມື່ອໃດ?

ຄຣິສຕຽນສ່ວນໃຫຍ່ຈະເວົ້າວ່າ ຄຳຕອບຂອງຄຳຖາມນີ້ແມ່ນຈັດເຈນ. ພວກເຂົາຈະເວົ້າວ່າ ພຣະຄຳພີເດີມໄດ້ເລີ່ມຕົ້ນໃນ ປະຖົມມະການ 1:1, ຂໍ້ທຳອິດໃນພຣະຄຳພີ. ແມ່ນແທ້ທີ່ພຣະຄຳພີຖືກແບ່ງອອກເປັນພຣະຄຳພີເດີມ ແລະ ພຣະຄຳພີໃຫມ່. ການແບ່ງພຣະຄຳພີເດີມນີ້, ແນ່ນອນ ເລີ່ມຕົ້ນໃນປະຖົມມະການ 1:1. ແຕ່ຍັງມີອີກວິທີຫນຶ່ງທີ່ຈະຕອບຄຳຖາມນີ້. ພຣະຄຳພີແມ່ນພັນທະສັນຍາ (ປຽບທຽບ ເຮັບເຣີ 8:7-8 ກັບ ເຮັບເຣີ 9:15). "ພຣະຄຳພີເດີມ" ຍັງສາມາດເອີ້ນໄດ້ອີກຢ່າງວ່າ ພັນທະສັນຍາເດີມ ຫຼື "ພັນທະສັນຍາທຳອິດ" ທີ່ຖືກມອບໃຫ້ໂມເຊ. ພຣະຄຳພີເດີມເລີ່ມຕົ້ນຢ່າງເປັນທາງການໃນອົບພະຍົບ 24:7-8 ຕອນທີ່ໂມເຊໄດ້ເອົາເລືອດຈາກງົວໃຫ້ແກ່ປະຊາຊົນອິດສະຣາເອນ ແລະກ່າວວ່າ, "ເບິ່ງແມ, ເລືອດແຫ່ງພັນທະສັນຍາທີ່ພຣະເຈົ້າຢາເວໄດ້ເຮັດກັບທ່ານກ່ຽວກັບພຣະຄຳເຫຼົ່ານີ້."

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/02/02_Ex_24_01_RG.jpg - ໃຊ້ສຳລັບເປັນຕົວຢ່າງຂອງອົບພະຍົບ 24:7-8 ເທົ່ານັ້ນ.

## ຄວາມລອດພົ້ນຜ່ານຊາດອິດສະຣາເອນ

ໃນບົດຮຽນທີ 17 ພວກເຮົາໄດ້ຮຽນຮູ້ວ່າ ອິດສະລາເອນແມ່ນຊົນຊາດທີ່ພຣະເຈົ້າຊົງເລືອກ. ພຣະເຈົ້າໄດ້ປະຖິ້ມຄົນຕ່າງຊາດໃນປະຖົມມະການບົດທີ 11. ມັນເປັນໄປໄດ້ບໍທີ່ຄົນຕ່າງຊາດຈະໄດ້ຮັບຄວາມລອດພົ້ນໃນຍຸກຂອງພັນທະສັນຍາເດີມ? ຖ້າໄດ້, ແມ່ນແນວໃດ? ພຣະເຈົ້າໄດ້ເວົ້າກັບອັບຣາຮາມກ່ຽວກັບເລື່ອງນີ້. "ເຈົ້າຈະເປັນທີ່ພຣະພອນໃຫ້ແກ່ທຸກຊົນຊາດເທິງແຜ່ນດິນໂລກ; ເພາະວ່າເຈົ້າໄດ້ເຊື່ອຟັງເຮົາ (ອ່ານປະຖົມມະການ 22:17-18). ຄົນຕ່າງຊາດຈະໄດ້ຮັບພຣະພອນໂດຍຜ່ານທາງເຊື້ອສາຍຂອງອັບຣາຮາມທີ່ເປັນຊາວອິດສະຣາເອນ. ນອກນັ້ນ, ໃນພຣະທຳເອຊາຢາຍັງຕອບຄຳຖາມຂອງພວກເຮົາ. ໃນເອຊາຢາ 2:1-3 ໄດ້ບອກພວກເຮົາວ່າ "ທຸກຊາດຈະຫຼັ່ງໄຫຼ" ເຂົ້າໄປໃນນະຄອນເຢຣູຊາເລັມລະຫວ່າງທີ່ອານາຈັກນີ້ຕັ້ງຢູ່. ພຣະຄຳຂອງພຣະເຈົ້າຈະກະຈາຍອອກຈາກເມືອງເຢຣູຊາເລັມໄປສູ່ທຸກຊາດ. ດັ່ງນັ້ນ, ພວກເຮົາສາມາດສະຫຼຸບໄດ້ວ່າໃນຍຸກຂອງພັນທະສັນຍາເດີມ, ຄົນຕ່າງຊາດຈະສາມາດຮັບການຊ່ວຍໃຫ້ລອດພົ້ນໂດຍຜ່ານທາງຊາດອິດສະຣາເອນເທົ່ານັ້ນ. ອິດສະຣາເອນແມ່ນທີ່ແຫ່ງພຣະພອນໄປສູ່ມະນຸດທຸກຊາດ.

## ຄວາມຫວັງຂອງໂລກ

ຫລາຍຄົນແປກໃຈທີ່ໄດ້ຮູ້ວ່າ ພຣະເຈົ້າບໍ່ໄດ້ສັນຍາຜູ້ທີ່ເຊື່ອໃນຍຸກພຣະຄຳພີເດີມວ່າ ພວກເຂົາຈະໄດ້ໄປສະຫວັນ! ອັບຣາຮາມ, ໂມເຊ ແລະ ດາວິດກໍບໍ່ມີຄວາມຫວັງກັບການມີຊີວິດນິລັນດອນໃນສະຫວັນເຊັ່ນກັນ! ແຕ່ອັນນີ້ແມ່ນຄວາມຈິງ. ພຣະເຈົ້າໄດ້ສັນຍາກັບຜູ້ທີ່ເຊື່ອໃນຍຸກພຣະຄຳພີເດີມເລື່ອງອານາຈັກເທິງແຜ່ນດິນໂລກ.

ອັບຣາຮາມ, ໂມເຊ, ດາວິດ ແລະ ຜູ້ທີ່ເຊື່ອທັງໝົດໃນຍຸກພຣະຄຳພີເດີມຫມົດຕ່າງກໍຫວັງວ່າ ຈະໄດ້ຊີວິດນິລັນດອນໃນອານາຈັກເທິງແຜ່ນດິນໂລກນີ້. ໂຢບໄດ້ໃຫ້ພະຍານດັ່ງຕໍ່ໄປນີ້: "ແຕ່ຂ້ອຍຮູ້ຜູ້ໜຶ່ງຢູ່ໃນສະຫວັນສະຖານ ຜູ້ທີ່ຈະມາໃນທີ່ສຸດ ປ້ອງກັນຊີວິດຂ້ອຍໄວ້. ແມ່ນວ່າເນື້ອກາຍຂ້ອຍຈະຖືກພະຍາດກັດກິນ ເມື່ອຍັງຢູ່ໃນຮ່າງກາຍ ຂ້ອຍຈະໄດ້ເຫັນພຣະເຈົ້າ." (ໂຢບ 19:25-26). ໂຢບເຊື່ອວ່າ, ເມື່ອລາວຕາຍໄປ ຮ່າງກາຍຂອງລາວຈະຖືກທຳລາຍ, ລາວຈະຟື້ນຄືນມາຈາກຕາຍ ແລະ ຈະເຫັນພຣະເຈົ້າຢູ່ເໜືອແຜ່ນດິນໂລກ. ໃຫ້ສັງເກດເບິ່ງສະຖານທີ່ຕັ້ງຂອງອານາຈັກທີ່ທຳນາຍໄວ້ໂດຍເຢເລມີຢາ: "ເບິ່ງແມ, ເມື່ອເວລານັ້ນມາເຖິງ, ເຮົາຈະເລືອກຜູ້ໜຶ່ງໃນເຊື້ອສາຍຂອງດາວິດມາເປັນກະສັດຜູ້ຊອບທຳ, ກະສັດຜູ້ນີ້ຈະປົກຄອງຢ່າງສະຫລາດ ແລະ ຈະເຮັດແຕ່ສິ່ງທີ່ຖືກຕ້ອງ ແລະ ຍຸດຕິທຳຕະຫລອດທົ່ວທັງປະເທດ" (ເຢເຣມີຢາ 23:5). ເຢເຣມີຢາ, ກໍບໍ່ຕ່າງຫຍັງກັບຜູ້ທີ່ເຊື່ອໃນຍຸກພຣະຄຳພີເດີມທີ່ຄອງຄອຍຫາອານາຈັກໃນແຜ່ນດິນໂລກນີ້.

ການສະຫຼຸບຂອງພຣະຄໍາພີເດີມ

ທຸກຄົນທີ່ມີຊີວິດຢູ່ໃນຍຸກຂອງພຣະຄໍາພີເດີມໄດ້ມີຊີວິດຢູ່ໃນສິ່ງທີ່ພຣະທໍາເອເຟໂຊ 2:11 ເອີ້ນວ່າ "ເວລາທີ່ຜ່ານມາ." "ເວລາທີ່ຜ່ານມາ" ແມ່ນຕ່າງຈາກເວລາປະຈຸບັນໃນຫຼາຍດ້ານ. ເລີ່ມຈາກໂມເຊ, ພວກເຂົາອາໄສຢູ່ພາຍໃຕ້ພຣະບັນຍັດ. ພວກເຮົາອາໄສຢູ່ພາຍໃຕ້ພຣະຄຸນ. ພຣະເຈົ້າໄດ້ຍົກໃຫ້ອິດສະຣາເອນຢູ່ເໜືອທຸກຊາດໃນ "ເວລາທີ່ຜ່ານມາ." ແຕ່ທຸກມື້ນີ້ ພຣະເຈົ້າບໍ່ໄດ້ຍົກຍ້ອງຊາດໃດຊາດໜຶ່ງອີກແລ້ວ (ໂຣມ 10:12). ຜູ້ທີ່ຢູ່ໃນ "ເວລາທີ່ຜ່ານມາ" ກໍາລັງຊອກຫາອານາຈັກເທິງແຜ່ນດິນໂລກ. ພວກເຮົາແມ່ນລໍຖ້າເວລາທີ່ພວກເຮົາຈະໄປສະຫວັນອັນນິລັນດອນ. ຄົນຕ່າງຊາດໃນ "ເວລາທີ່ຜ່ານມາ" ໄດ້ຮັບຄວາມລອດພົ້ນໂດຍຜ່ານຊາດອິດສະຣາເອນ. ທຸກມື້ນີ້ຄົນຕ່າງຊາດບໍ່ໄດ້ຮັບຄວາມລອດພົ້ນໂດຍຜ່ານຊາດອິດສະຣາເອນອີກແລ້ວ, ແຕ່ໂດຍພຣະຄຸນ, ຄວາມເຊື່ອ ເຖິງແມ່ນວ່າ ອິດສະຣາເອນໄດ້ປະຕິເສດພຣະຜູ້ຊ່ອຍຂອງຕົນເອງກໍຕາມ. ຈຸດເລີ່ມຕົ້ນຂອງພຣະສັນຍາເດີມ ຄື ນັບເວລາຕັ້ງແຕ່ "ອາດາມຫາໂມເຊ" ແລະຈາກໂມເຊຫາພຣະຄຣິດ (ພຣະບັນຍັດຫາພຣະຄຸນ) ທີ່ໄດ້ກ່າວໄວ້ໃນ ໂຣມ 5:13-16. ສ່ວນທີ່ເຫຼືອຂອງພຣະຄໍາພີເດີມແມ່ນຕັ້ງແຕ່ໂມເຊຫາພຣະຄຣິດ.

ໃນປະຖົມມະການ ແລະ ສ່ວນທໍາອິດຂອງພຣະທໍາອົບພະຍົບທີ່ພວກເຮົາອ່ານແມ່ນກ່ຽວກັບຍຸກສະໄໝຂອງ "ອາດາມຫາໂມເຊ." ຕອນທີ່ພຣະບັນຍັດຖືກມອບໃຫ້ໂມເຊ, ຍຸກສະໄໝໂມເຊຫາພຣະຄຣິດ (ພຣະບັນຍັດຫາພຣະຄຸນ) ໄດ້ເລີ່ມຕົ້ນ. [ເບິ່ງ ໂຣມ 5:13–16] "ພຣະສັນຍາ" ເລີ່ມຕົ້ນຈາກອັບຣາຮາມ ແລະ ສືບຕໍ່ໄປຕະຫຼອດສ່ວນທີ່ເຫຼືອໃນພຣະສັນຍາເດີມ. "ພຣະບັນຍັດ" ເລີ່ມຕົ້ນກັບໂມເຊ ແລະ ຍັງສືບຕໍ່ຜ່ານສ່ວນທີ່ເຫຼືອຂອງພຣະສັນຍາເດີມ. [ເບິ່ງ ຄາລາເຕຍ 3:17]

ຄໍາຖາມທວນຄືນ ບົດຮຽນ 18 - ອານາຈັກ ແລະ ພຣະສັນຍາເດີມ

ຖືກ ຫຼື ຜິດ

1. ພຣະເຈົ້າສັນຍາກັບອັບຣາຮາມວ່າຈະໃຫ້ບ້ານອັນນິລັນດອນໃນສະຫວັນແກ່ລາວ.
2. ອານາຈັກທີ່ສັນຍາໄວ້ກັບດາວິດຈະເປັນອານາຈັກແຫ່ງຄວາມຊອບທໍາ.
3. ເນື່ອງຈາກຄວາມຊົ່ວຮ້າຍຂອງມະນຸດ ໂລກຈະບໍ່ມີຄວາມຮູ້ເລື່ອງພຣະຜູ້ເປັນເຈົ້າ.
4. ອານາຈັກທີ່ສັນຍາໄວ້ກັບດາວິດເປັນອານາຈັກຝ່າຍຈິດວິນຍານ ແລະ ຫຼາຍຄົນຈະຍັງທົນທຸກຈາກພະຍາດຝ່າຍຮ່າງກາຍເຊັ່ນ: ຕາບອດ ແລະ ຫູໜວກຢູ່ໃນອານາຈັກ.

ຄໍາຖາມແບບປາລະໄນ

5. ດານີເອນບົດທີສອງຢືນຢັນວ່າລາຊະອານາຈັກ:

ກ) ຈະຢູ່ໃນສະຫວັນ

ຂ) ຈະເປັນອານາຈັກຕາມຄວາມໝາຍຕາຍຕົວ, ອານາຈັກທາງດ້ານຮ່າງກາຍຢູ່ໃນໂລກ

ຄ) ຢູ່ໃນໃຈຂອງພວກເຮົາ

ງ) ບໍ່ສາມາດເຂົ້າໃຈໄດ້ໂດຍມະນຸດ

6. ໃນຍຸກຂອງພຣະສັນຍາເດີມ ຄົນຕ່າງຊາດໄດ້ຮັບຄວາມລອດພົ້ນ:

ກ) ໂດຍການຮັບບັບຕິສະມາໃນນໍ້າ

ຂ) ດ້ວຍການເປັນຄົນຈິງໃຈ

ຄ) ໃນວິທີດຽວກັນກັບຄົນຕ່າງຊາດທີ່ໄດ້ຮັບຄວາມລອດພົ້ນໃນມື້ນີ້

ງ) ໂດຍຜ່ານຊາດອິດສະຣາເອນ

7. ທຸກຄົນທີ່ມີຊີວິດໃນສະໄຫມຂອງພຣະສັນຍາເດີມແມ່ນຢູ່ໃນ:

ກ) ເວລາທີ່ຜ່ານມາ

ຂ) ເວລາທີ່ຈະມາເຖິງ

ຄ) ເວລາຂອງພຣະຄຸນ

ງ) ເວລາຂອງ "ອາດາມຫາໂມເຊ"

<u>ຕື່ມໃສ່ຊ່ອງຫວ່າງ</u>

8. "ພຣະສັນຍາ" ເລີ່ມຕົ້ນກັບ____________ແລະ "ພຣະບັນຍັດ" ເລີ່ມກັບ____________.

9. "ພວກເຂົາທັງຫມົດຈະບໍ່ຮຽນຮູ້________________________ອີກຕໍ່ໄປ" (ເອຊາຢາ 2:4).

10 ."____________________ຈະຢູ່ກັບ____________________ (ເອຊາຢາ 11:6).

<u>ສໍາລັບການສຶກສາເພີ່ມເຕີມ</u>

1. ອ່ານເອຊາຢາ 60:1-3. ຄົນຕ່າງຊາດຈະເຮັດແນວໃດເມື່ອພຣະຣັດສະຫມີຂອງພຣະເຈົ້າສ່ອງມາເຫນືອອິດສະຣາເອນ?

2. ອ່ານເສກາຣີຢາ 8:23. ຄົນຕ່າງຊາດຈະເຮັດຫຍັງໃນສະໄຫມລາຊະອານາຈັກ?

3. ພຣະເຈົ້າພຣະບິດາຊົງສັນຍາວ່າຈະໃຫ້ພຣະບຸດຄອບຄອງຫຍັງໃນເພງສັນລະເສີນ 2:8?

4. ໃນເຢເຣມີຢາ 31:12 ມີຂໍ້ມູນຫຍັງກ່ຽວກັບລາຊະອານາຈັກ?

5. ໃນຍຸກແຫ່ງລາຊະອານາຈັກ, ແຜ່ນດິນໂລກຈະເຕັມໄປດ້ວຍຄວາມຮູ້ເລື່ອງພຣະຜູ້ເປັນເຈົ້າ ແລະ ເລື່ອງໃດອີກ? (ເພງສັນລະເສີນ 72:19)